# ບົດທີ 3
# ການນຳໃຊ້ຫຼັກສູດສະບັບປັບປຸງໃໝ່ຊັ້ນປະຖົມສຶກສາປີທີ 3
# ການວັດ ແລະ ປະເມີນຜົນ

## 1. ບົດບາດຍິງ-ຊາຍ ແລະ ການສຶກສາຮຽນຮ່ວມ: ນັກຮຽນຜູ້ທີ່ມີຄວາມຫຍຸ້ງຍາກທາງຮ່າງກາຍ

ຄູສອນບໍ່ຄວນປະເມີນນັກຮຽນໃນກິດຈະກາທີ່ບໍ່ໃຫ້ນັກຮຽນຜູ້ທີ່ມີຄວາມຫຍຸ້ງຍາກທາງຮ່າງກາຍເຂົ້າຮ່ວມໃນລາຍວິຊາທີ່ກ່ຽວຂ້ອງກັບການເຄື່ອນໄຫວຂອງຮ່າງກາຍ (ກາຍຍະພາບ ). ເມື່ອເປັນເຊັ່ນນີ້, ຄູສອນຄວນຮັບປະກັນວ່າ ນັກຮຽນຜູ້ທີ່ມີຄວາມຫຍຸ້ງຍາກທາງຮ່າງກາຍສາມາດເຂົ້າຮ່ວມກິດຈະກຳໃຫ້ຫຼາຍເທົ່າທີ່ຈະເປັນໄປໄດ້ ເຖິງແມ່ນວ່າ ພວກເຂົາຈະບໍ່ໄດ້ຖືກປະເມີນກໍຕາມ. ຄູສອນຄວນເຮັດຈຸດນີ້ໂດຍ:

1. ໃຫ້ນັກຮຽນຜູ້ທີ່ມີຄວາມບົກຜ່ອງທາງຮ່າງກາຍໄດ້ມີບົດບາດໃດໜຶ່ງ ເພື່ອໃຫ້ເຂົາເຈົ້າໄດ້ມີສ່ວນຮ່ວມໃນກິດຈະກຳທີ່ຕ້ອງໄດ້ປະຕິບັດຕົວຈິງ ຕົວຢ່າງ: ເປັນກຳມະການໃນວິຊາ ພະລະສຶກສາ.
2. ຈັດສັບຫ້ອງຮຽນ ເພື່ອໃຫ້ນັກຮຽນສາມາດເຂົ້າຮ່ວມການຮຽນງ່າຍຂຶ້ນ ຕົວຢ່າງ: ການຍ້າຍນັກຮຽນຜູ້ທີ່ມີບັນຫາທາງສາຍຕາ, ການໄດ້ຍິນສຽງ ມານັ່ງທາງໜ້າຂອງຫ້ອງ ເພື່ອໃຫ້ພວກເຂົາສາມາດເຫັນກະດານ ແລະ ໄດ້ຍິນສຽງຄູສອນໄດ້ດີຂຶ້ນ. ການຍ້າຍໂຕະ ແລະ ຕູ້ປຶ້ມ ເພື່ອໃຫ້ນັກຮຽນຜູ້ທີ່ມີບັນຫາໃນການເຄື່ອນຍ້າຍສາມາດເຄື່ອນໄຫວໄປມາໃນຫ້ອງຮຽນໄດ້ຢ່າງສະດວກ.
3. ຂຽນຂໍ້ຄວາມໃຫ້ກຳລັງໃຈນັກຮຽນຜູ້ທີ່ມີຄວາມຫຍຸ້ງຍາກທາງຮ່າງກາຍໃສ່ໃນບໍລິເວນໃດໜຶ່ງຂອງຫ້ອງຮຽນ ຕົວຢ່າງ: ການອະທິບາຍ ແລະ ການສະແດງອອກຂອງນັກຮຽນຜູ້ທີ່ຄວາມຫຍຸ້ງຍາກທາງຮ່າງກາຍສາມາດເຮັດໄດ້ເທົ່າທຽມກັບນັກຮຽນຜູ້ອື່ນໆ ຖ້າຫາກພວກເຮົາໄດ້ຮັບການຊ່ວຍເຫຼືອທີ່ຈຳເປັນ.

## 2. ຂະບວນການຂອງການວັດ ແລະ ປະເມີນຜົນ

ອ່ານກ່ຽວກັບຂະບວນການວັດ ແລະ ປະເມີນຜົນໃນຫຼັກສູດຊັ້ນປະຖົມສຶກສາ ສະບັບປັບປຸງໃໝ່ລຸ່ມນີ້. ສຳລັບແຕ່ລະຫົວຂໍ້ ໃຫ້ເລືອກເອົາຄຳຕອບທີ່ຖືກຕ້ອງ ( a ຫຼື b ) ຕາມຫົວຂໍ້ລຸ່ມນີ້.

| 1. ການວັດ ແລະ ປະເມີນຜົນ |
|---|
| ການວັດ ແລະ ປະເມີນຜົນ ແມ່ນເປັນສິ່ງທີ່ສຳຄັນ ເພາະມັນໄດ້ຊ່ວຍໃຫ້ຄູສອນຮູ້ວ່າ ນັກຮຽນໄດ້ຮຽນຮູ້ຫຍັງ ແລະ ສາມາດນຳໃຊ້ໄດ້ຫຼາຍປານໃດ. ການວັດ ແລະ ປະເມີນຜົນບໍ່ເກີດຂຶ້ນໂດຍພຽງແຕ່ໃນຕອນທ້າຍຂອງບົດຮຽນ ແຕ່ຄວນມີບາງຢ່າງທີ່ຄູສອນນັ້ນສາມາດເຮັດຕະຫຼອດການສອນ. ການປະເມີນແມ່ນປະກອບມີຫຼາຍກວ່າການໃຫ້ນັກຮຽນສອບເສັງໃສ່ເຈ້ຍ. ການປະເມີນແມ່ນຍັງປະກອບມີ:<br>➢ ການຕັ້ງຄຳຖາມ ຖາມນັກຮຽນໃນຕອນຕົ້ນຂອງບົດຮຽນ ເພື່ອຮູ້ໄດ້ວ່າ ພວກເຂົາໄດ້ຮູ້ຫຍັງແດ່ແລ້ວກ່ຽວກັບຫົວຂໍ້.<br>➢ ຕັ້ງຄຳຖາມ ຖາມນັກຮຽນໃນຕອນກາງຂອງບົດຮຽນ ເພື່ອກວດຄືນວ່າ ນັກຮຽນນັ້ນໄດ້ເຂົ້າໃຈຄູບໍ,ການໃຫ້ການຕິດຕາມນັກຮຽນໃນເວລາທີ່ພວກເຂົາເຮັດວຽກເປັນລາຍບຸກຄົນ, ເຮັດວຽກເປັນຄູ່ ຫຼື ເປັນກຸ່ມ ເພື່ອກວດຄືນວ່າ ພວກເຂົາສາມາດເຮັດໄດ້ດ້ວຍຕົວຂອງເຂົາເຈົ້າເອງ ຫຼືວ່າ ພວກເຂົາຕ້ອງຄວາມຊ່ວຍເຫຼືອຈາກຄູສອນ. |

| |
|---|
| ➢ ສັງເກດນັກຮຽນໃນເວລາທີ່ພວກເຂົາເຮັດກິດຈະກຳໃນຕອນທ້າຍຂອງບົດຮຽນ ເພື່ອກວດເບິ່ງວ່າພວກເຂົາສາມາດນຳເອົາສິ່ງທີ່ພວກເຂົາໄດ້ຮຽນຮູ້ນັ້ນໄປໃຊ້ໄດ້ແນວໃດ ແລະ ໃຫ້ຄະແນນພວກເຂົາຕາມເກນການໃຫ້ຄະແນນ. |
| ຄູສອນຄວນ:<br>a. ວັດ ແລະ ປະເມີນນັກຮຽນໃນຕອນທ້າຍຂອງບົດຮຽນ.<br>b. ສືບຕໍ່ວັດ ແລະ ປະເມີນນັກຮຽນຕະຫຼອດການສອນ. |

| |
|---|
| **2. ການປະເມີນໃນຫຼັກສູດຊັ້ນປະຖົມສຶກສາ** |
| ຫຼັກສູດຊັ້ນປະຖົມສຶກສາ ສະບັບປັບປຸງໃໝ່ ແມ່ນຮຽກຮ້ອງໃຫ້ຄູສອນໄດ້ນຳໃຊ້ທັງສອງການປະເມີນຄື: ການປະເມີນເພື່ອປັບປຸງຜົນການຮຽນ ແລະ ການປະເມີນເພື່ອສະຫຼຸບຜົນການຮຽນ. ການປະເມີນເພື່ອປັບປຸງຜົນການຮຽນແມ່ນປະກອບມີ ຄູສອນສັງເກດນັກຮຽນ ແລະ ຖາມນັກຮຽນ, ເຊິ່ງປົກກະຕິແລ້ວ ແມ່ນຈະຢູ່ໃນຊ່ວງຕອນຕົ້ນ ແລະ ຕອນກາງຂອງບົດຮຽນ ເພື່ອຮູ້ໄດ້ວ່ານັກຮຽນນັ້ນເຂົ້າໃຈໄດ້ຫຼາຍພຽງໃດ ແລະ ສາມາດປະຕິບັດກິດຈະກຳນັ້ນໄດ້ ຫຼື ບໍ່ ແລະ ນັກຮຽນຕ້ອງການຄວາມຊ່ວຍເຫຼືອຈາກຄູສອນບໍ, ການປະເມີນເພື່ອສະຫຼຸບຜົນການຮຽນ ແມ່ນປະກອບມີ ຄູສອນສັງເກດການເຮັດວຽກຂອງນັກຮຽນເປັນລາຍບຸກຄົນຢ່າງເອກະລາດ, ນັກຮຽນອາດຈະເຮັດກິດຈະກຳເປັນລາຍບຸກຄົນ. ເປັນຄູ່ ຫຼື ເປັນກຸ່ມ ແລະ ການໃຫ້ຄະແນນພວກເຂົາແມ່ນຂຶ້ນກັບວ່າພວກເຂົາເຮັດໜ້າວຽກ ( ວຽກທີ່ມອບໝາຍ ) ນັ້ນໄດ້ດີພຽງໃດ. ຕາມປົກກະຕິແລ້ວແມ່ນເກີດຂຶ້ນໃນຕອນທ້າຍຂອງບົດຮຽນ ແລະ ຊ່ວຍໃຫ້ຄູສອນຮູ້ໄດ້ວ່າ ຈຸດປະສົງຂອງບົດຮຽນນັ້ນສາມາດບັນລຸໄດ້ ຫຼື ບໍ່. ແຕ່ລະບົດສອນແມ່ນປະກອບມີກ່ອງຂອງການວັດ ແລະ ປະເມີນຜົນ ເຊິ່ງຊີ້ບອກວ່າຄູສອນວ່າເວລາໃດ ແລະ ວິທີໃດແດ່ທີ່ຄູສອນດຳເນີນການປະເມີນທັງສອງຮູບແບບນີ້. ສຳລັບວິຊາ ພາສາລາວ ປະກອບມີພຽງແຕ່ກ່ອງການປະເມີນເພື່ອສະຫຼຸບຜົນການຮຽນ ແລະ ການວັດ ແລະ ປະເມີນຜົນ-ຄຳແນະນຳສຳລັບການປະເມີນເພື່ອປັບປຸງການຮຽນແມ່ນໄດ້ຂຽນເຂົ້າໃນກິດຈະກຳ. |

| | |
|---|---|
| ການວັດ ແລະ ປະເມີນຜົນ<br>ປະເມີນຄວາມສາມາດຂອງນັກຮຽນໃນການເວົ້າອອກສຽງອັກສອນທີ່ໄດ້ຮຽນມາ ໂດຍການນຳໃຊ້ເກມການໃຫ້ຄະແນນຈາກຂັ້ນຕອນທຳອິດຂອງບົດຮຽນ. | ການວັດ ແລະ ປະເມີນຜົນ<br>ກວດເບິ່ງການອອກສຽງຂອງນັກຮຽນເນັ້ນເວົ້າອອກສຽງ ແລະ ສະແດງທ່າທາງປະກອບ |

ຄູສອນຄວນ:

a. ນຳໃຊ້ທັງສອງຮູບແບບການປະເມີນຄື ການປະເມີນເພື່ອປັບປຸງຜົນການຮຽນ ແລະ ການປະເມີນເພື່ອສະຫຼຸບຜົນການຮຽນ.

b. ນຳໃຊ້ການປະເມີນອັນໃດອັນໜຶ່ງເທົ່ານັ້ນ.

**3. ເກມການປະເມີນແບບຮູບຣິກ**

ຫຼັກສູດຊັ້ນປະຖົມສຶກສາ ສະບັບປັບປຸງໃໝ່ແມ່ນໄດ້ທົດແທນ

| ຄະແນນ | ນັກຮຽນສາມາດຖາມ ແລະ ຕອບຄຳຖາມ what is you mane ? ( ເຈົ້າຊື່ຫຍັງ ?) |
|---|---|
| 3 | ສາມາດຖາມ ແລະ ຕອບຄຳຖາມ what is you mane ? ( ເຈົ້າຊື່ຫຍັງ ?) ຢ່າງລ່ຽນໄຫຼ ແລະ ລະອຽດ |
| 2 | ສາມາດຖາມ ແລະ ຕອບຄຳຖາມ what is you mane ? ແຕ່ມີການຄ້າງຄາ ແລະ ມີຄວາມຜິດໜ້ອຍໜຶ່ງ. |
| 1 | ສາມາດຖາມ ແລະ ຕອບຄຳຖາມ what is you |

| | |
|---|---|
| | mane ? ໃນເວລາທີ່ໄດ້ຮັບຄວາມຊ່ວຍເຫຼືອຈາກຄູ. |
| 0 | ບໍ່ສາມາດຖາມ ແລະ ຕອບຄຳຖາມ what is you mane ? ( ເຈົ້າຊື່ຫຍັງ ?) |

ການປະເມີນປະຈຳອາທິດ ແລະ ການສອບເສັງ ປະຈຳເດືອນ ໂດຍລະບົບການປະເມີນແບບຮູບຣິກ. ແຕ່ແນວໃດກໍ່ຕາມ ການສອບເສັງໃນພາກຮຽນທີ 1 ແລະ ພາກຮຽນທີ 2 ແມ່ນຍັງດຳເນີນການສອບເສັງແບບຂຽນໃສ່ເຈ້ຍ, ບົດສອນແຕ່ລະບົດແມ່ນປະກອບມີເກນການປະເມີນແບບຮູບຣິກ ເຊິ່ງຊ່ວຍໃຫ້ຄູສອນເຫັນໄດ້ ແລະ ຮູ້ໄດ້ວ່ານັກຮຽນສາມາດບັນລຸຈຸດປະສົງຂອງບົດຮຽນບໍ, ເກນການປະເມີນແບບຮູບຣິກ ແມ່ນປະກອບມີຕົວຊີ້ວັດຜົນສຳເລັດໃນລະດັບທີ່ແຕກຕ່າງກັນຂຶ້ນກັບຈຸດປະສົງຂອງບົດຮຽນ.
ສຳລັບເກນປະເມີນວິຊາ ພາສາລາວມີທັງໝົດ 18 ເກນ ແລະ ເຊິ່ງແຕ່ລະບົດຈະນຳໃຊ້ການປະເມີນໃຫ້ຄະແນນ 4 ເກນ ຂຶ້ນກັບຫົວຂໍ້ທີ່ຈະວັດ:
ໃນບົດຮຽນໃດໜຶ່ງແມ່ນມີ 9 ຊົ່ວໂມງ, ພາຍໃນ 4 ເກນນັ້ນ, 2 ເກນຈະໃຊ້ປະເມີນທັກສະການຟັງ ແລະ ການເວົ້າ, ໜຶ່ງເກນສຳລັບການອ່ານ ແລະ ອີກໜຶ່ງເກນສຳລັບການຂຽນ, ສຳລັບວິຊາອື່ນ ແມ່ນນຳໃຊ້ໜຶ່ງເກນການປະເມີນ, ເກນການປະເມີນແຍຍຮູກຣິກ ແມ່ນມີຄວາມຍາວ ແລະ ລຳດັບຄະແນນຈາກ 0-2 ໄປຫາຄະແນນ 0-4.
ເກນການປະເມີນຈະຖືກນຳໃຊ້ສຳລັບການປະເມີນເພື່ອສະຫຼຸບຜົນການຮຽນຮູ້ຢູ່ໃນຂັ້ນຝຶກປະຕິບັດ ແລະ ນຳໃຊ້

**ເກນການປະເມີນແບບຮູບຣູກແມ່ນເພື່ອ:**

a. ຄູສອນແມ່ນຈະປະຫຍັດເວລາໄດ້ໃນການຂຽນ, ການໃຫ້ນັກຮຽນເຮັດບົດສອບເສັງ ແລະ ການກວດບົດສອບເສັງ.
b. ຄູສອນຈະໃຊ້ເວລາເພີ່ມເຕີມໃສ່ການປະເມີນເພື່ອສະຫຼຸບຜົນການຮຽນໃນຫຼັກສູດຊັ້ນປະຖົມສຶກສາສະບັບປັບປຸງໃໝ່ຫຼາຍກວ່າຫຼັກສູດສະບັບເກົ່າ.

4. ຕາຕະລາງໄລຍະເວລາຂອງການປະເມີນ

ຄູສອນຄວນປະເມີນນັກຮຽນ 4 ຄັ້ງຕໍ່ເດືອນໃນລາຍວິຊາ ພາສາລາວຄື: ຄັ້ງທີໜຶ່ງແມ່ນປະເມີນການເວົ້າ, ອີກໜຶ່ງຄັ້ງແມ່ນການຟັງ ອີກຄັ້ງໜຶ່ງແມ່ນປະເມີນການອ່ານ ແລະ ອີກຄັ້ງໜຶ່ງແມ່ນການຂຽນ, ແຕ່ລະບົດສອນຂອງວິຊາພາສາລາວ ແມ່ນປະກອບມີ 4 ກິດຈະກຳການປະເມີນ ເຊິ່ງລົງເລິກກ່ຽວກັບແຕ່ລະທັກສະ, ສຳລັບວິຊາ ຄະນິດສາດ , ຄູສອນຄວນປະຕິບັດຕາມຂະບວນການຂອງການປະເມີນທີ່ໄດ້ອະທິບາຍໄວ້ໃນປຶ້ມຄູ່ມືຄູ ວິຊາຄະນິດສາດ, ສຳລັບລາຍວິຊາອື່ນໆ ຄູສອນເຮັດການປະເມີນ 2 ຄັ້ງຕໍ່ເດືອນ, ສິ່ງນີ້ແມ່ນຂຶ້ນກັບການຕັດສິນໃຈຂອງຄູສອນວ່າ ບົດສອນໃດພວກເຂົາຈະປະເມີນນັກຮຽນ, ສຳລັບຄູສອນຜູ້ທີ່ມີນັກຮຽນຫຼາຍຄົນ( ຫ້ອງຮຽນໃຫຍ່) ມັນອາດຈະເປັນໄປໄດ້ທີ່ຄູສອນນັ້ນຈະປະເມີນນັກຮຽນຈຳນວນເຄິ່ງຫ້ອງນັ້ນກ່ອນໃນບົດສອນໜຶ່ງ ແລະ ອີກເຄິ່ງໜຶ່ງແມ່ນປະເມີນ

ໃນບົດສອນຕໍ່ໄປ, ສໍາລັບວິຊາພາສາລາວຂັ້ນ ປ 3 , ຄູສອນຈະຕື່ມ 4 ຄະແນນຂອງເກມປະເມີນແບບຮູກຣິກທີ່ໄດ້ປະເມີນນັ້ນ ເພື່ອໃຫ້ອອກມາເປັນຄະແນນປະຈໍາເດືອນ, ແຕ່ວ່າສໍາລັບລາຍວິຊາອື່ນ ( ບໍລວມວິຊາຄະນິດສາດ ), ຄູສອນຈະຕ້ອງປ່ຽນຄະແນນຂອງນັກຮຽນທີ່ເປັນຄະແນນໃນເກມຣູບຣິກນັ້ນມາເປັນຄະແນນສ່ວນ 10, ສະເລ່ຍຄະແນນເຫຼົ່ານີ້ ອອກມາເປັນຄະແນນປະຈໍາເດືອນ, ຕົວຢ່າງ, ບົດສອນພາສາລາວບົດໜຶ່ງມີ 9 ຊົ່ວໂມງ ແມ່ນຈະໄດ້ສອນພາຍໃນໜຶ່ງອາທິດ ໝາຍຄວາມວ່າ 4 ບົດສອນຈະໄດ້ສອນພາຍໃນໜຶ່ງເດືອນ. ຖ້າຄູສອນມີນັກຮຽນ 20 ຄົນຢູ່ໃນຫ້ອງຮຽນພວກເຂົາຄວນແບ່ງນັກຮຽນອອກເປັນກຸ່ມຄື: ກຸ່ມ A ແລະ ກຸ່ມ B. ນັກຮຽນໃນກຸ່ມ A ຈະຖືກປະເມີນໃນບົດສອນລໍາດັບທີ 1 ແລະ ລໍາດັບທີ 3 ຂອງແຕ່ລະເດືອນ, ນັກຮຽນຢູ່ໃນກຸ່ມ B ຈະຖືກປະເມີນໃນບົດສອນລໍາດັບທີ 2 ແລະ ທີ 4 ຂອງແຕ່ລະເດືອນ, ຕົວຢ່າງລຸ່ມນີ້ໄດ້ສະແດງໃຫ້ເຫັນເຖິງວິທີທີ່ສາມາດຄິດໄລ່ອອກມາເປັນຄະແນນປະຈໍາເດືອນ.

ຕົວຢ່າງ ຄະແນນຣູບຣິກຂອງນັກຮຽນ ສໍາລັບວິຊາພາສາລາວ

| | ບົດທີ 1 | ບົດທີ 2 | ບົດທີ 3 | ບົດທີ 4 |
|---|---|---|---|---|
| ເວົ້າ | 2 | ນັກຮຽນຈະບໍ່ໄດ້ຖືກປະເມີນ | 1 | ນັກຮຽນຈະບໍ່ໄດ້ຖືກປະເມີນ |
| ຟັງ | 1 | | 1 | |
| ອ່ານ | 2 | | 2 | |
| ຂຽນ | 3 | | 2 | |

ຄະແນນລວມຂອງນັກຮຽນສໍາລັບບົດສອນລໍາດັບທີ 1 ແມ່ນ 8 ( 2+1+2+3 ) ແລະ 6 ສໍາລັບບົດສອນລໍາດັບທີ 3 ( 1+1+2+2). ຄະແນນລວມທັງສອງເຫຼົ່ານີ້ຈະຕ້ອງສະເລ່ຍອອກມາເປັນຄະແນນປະຈໍາເດືອນຂອງນັກຮຽນສໍາລັບວິຊາພາສາລາວ (8+6) ÷ 2 = 7 . ຄູສອນຄວນຂຽນບັນທຶກການປະເມີນນັກຮຽນຕົນໃສ່ໃນປຶ້ມບັນທຶກຂອງໃຜລາວ.

ສໍາລັບວິຊາອື່ນໆ ( ລວມທັງຄະນິດສາດ ) ຄູສອນຈະຕ້ອງໄດ້ປ່ຽນຄະແນນຣູບຣິກຂອງນັກຮຽນມາເປັນຄະແນນສ່ວນ 10 ແລະ ສະເລ່ຍຄະແນນດັ່ງກ່າວມາເປັນຄະແນນປະຈໍາເດືອນ ( ວິຊາ ພາສາລາວ ໜ້າ 8 ເພື່ອທີ່ຈະຮູ້ໄດ້ວິທີປ່ຽນຄະແນນແບບຣູບຣິກມາເປັນຄະແນນສ່ວນ 10 ) ກ່ອນທີ່ຈະຂຽນບັນທຶກໃສ່ໃນປຶ້ມບັນທຶກຄະແນນ.

ຕົວຢາງ, ວິຊາ ພະລະສຶກສາ ຈະໄດ້ສອນໜຶ່ງຄັ້ງໃນໜຶ່ງອາທິດ ເຊິ່ງໝາຍຄວາມວ່າ 4 ບົດສອນຂອງວິຊາພະລະ ສຶກສາແມ່ນໄດ້ສອນພາຍໃນໜຶ່ງເດືອນ. ຄູສອນສາມາດນໍາໃຊ້ການປະເມີນກຸ່ມແບບດຽວກັນທີ່ໄດ້ເຮັດສໍາລັບວິຊາ ພາສາລາວ ( ກຸ່ມ A ແລະ B ), ນັກຮຽນໃນກຸ່ມ A ຈະໄດ້ຖືກປະເມີນໃນບົດສອນລໍາດັບທີ 1 ແລະລໍາດັບທີ 3 ຂອງແຕ່ລະເດືອນ ແລະ ນັກຮຽນ ກຸ່ມ B ແມ່ນຈະໄດ້ຖືກປະເມີນໃນບົດຮຽນລໍາດັບທີ 2 ແລະ ລໍາດັບທີ 4 ຂອງແຕ່ລະເດືອນ, ຕົວຢ່າງຫ້ອງຕາຕະລາງລຸ່ມນີ້ໄດ້ສະແດງໃຫ້ເຫັນເຖິງວິທີທີ່ຄະແນນປະຈໍາເດືອນສາມາດຄິດໄລ່ອອກມາ.

ຕົວຢາງ, ຄະແນນຣູບຣິກຂອງນັກຮຽນ ສໍາລັບວິຊາ ພະລະສຶກສາ

| | ຄະແນນຣູບຣິກຂອງນັກຮຽນ |
|---|---|
| ບົດຮຽນທີ 1 | 2 |
| ບົດຮຽນທີ 2 | ນັກຮຽນຈະບໍ່ໄດ້ຖືກປະເມີນ |
| ບົດຮຽນທີ 3 | 3 |
| ບົດຮຽນທີ 4 | ນັກຮຽນຈະບໍ່ໄດ້ຖືກປະເມີນ |

ເພື່ອຄິດໄລ່ຄະແນນປະຈາເດືອນຂອງນັກຮຽນ, ຄະແນນຣູບຣິກທັງສອງຄະແນນຕ້ອງໄດ້ປ່ຽນມາເປັນຄະແນນສ່ວນ 10 ກ່ອນ. ສໍາລັບບົດສອນລໍາດັບທີ 1 ຄະແນນທີ່ເປັນຄະແນນສ່ວນ 10 ຂອງນັກຮຽນແມ່ນ 7 (2÷3)×10= 6.6. ສໍາລັບບົດສອນລໍາດັບທີ 3 ຄະແນນທີ່ເປັນຄະແນນສ່ວນ 10 ຂອງນັກຮຽນແມ່ນ (3÷3)×10=10. ຄະແນນທັງສອງນີ້ຕ້ອງໄດ້ສະເລ່ຍເປັນຄະແນນປະຈໍາເດືອນຂອງນັກຮຽນ ສໍາລັບວິຊາ ພະລະສຶກສາ ( 7÷ 10)÷2=8,5. ຄູສອນຕ້ອງໄດ້ຂຽນບັນທຶກຄະແນນປະຈໍາເດືອນສໍາລັບວິຊາ ພະລະສຶກສາ ຄະແນນ 9 ໃສ່ໃນຖັນ ຄະແນນສະເລ່ຍໃສ່ໃນປຶ້ມບັນທຶກຄະແນນ.

ການປະເມີນແບບໃໝ່ແມ່ນຮຽກຮ້ອງໃຫ້ຄູສອນປະເມີນນັກຮຽນ:

a. ໃນກຸ່ມໃຫຍ່ກຸ່ມໜຶ່ງໃນທຸກໆບົດຮຽນ.
b. ໃນສອງກຸ່ມ ເຊິ່ງແຕ່ລະກຸ່ມຈະຖືກປະເມີນສະຫຼັບກັນໄປໃນແຕ່ລະອາທິດ.

5. ການຊ່ວຍເຫຼືອນັກຮຽນ

ຖ້າຄູສອນປະເມີນນັກຮຽນໃນຊ່ວງການຂອງບົດຮຽນ ແລະ ເຫັນວ່ານັກຮຽນຫຼາຍໆຄົນຍັງມີບັນຫາ, ສິ່ງທີ່ສໍາຄັນນັ້ນ ກໍຄື ຄູສອນຕ້ອງໃຫ້ການຊ່ວຍເຫຼືອນັກຮຽນເຫຼົ່ານັ້ນເພີ່ມເຕີມ ທັງນີ້ກໍເພື່ອຮັບປະກັນວ່າພວກເຂົານັ້ນສາມາດບັນລຸຈຸດປະສົງຂອງບົດສອນ. ຄ້າຍຄືກັນນັ້ນ, ຖ້າໃນຕອນທ້າຍຂອງບົດສອນ, ນັກຮຽນຫຼາຍໆຄົນຍັງມີຄະແນນຕໍ່າໃນເວລາທີ່ຄູສອນປະເມີນພວກເຂົາຕາມເກນການໃຫ້ຄະແນນ ( ເກນຣູບຣິກ), ຄູສອນບໍ່ຄວນສືບຕໍ່ສອນບົດຮຽນຕໍ່ໄປ. ແທນທີ່ຄູສອນນັ້ນຕ້ອງໄດ້ຊອກຫາເວລາ ( ອາດຈະເປັນຊ່ວງພັກຜ່ອນ ຫຼື ຊຊ້ວງພັກທ່ຽງ ) ເພື່ອທົບທວນຄືນເນື້ອໃນບົດຮຽນທັງນີ້ກໍເພື່ອຮັບປະກັນວ່າ ນັກຮຽນມີຄວາມໝັ້ນໃຈຫຼາຍຂຶ້ນກ່ຽວກັບບົດຮຽນກ່ອນທີ່ຈະກ້າວໄປຫາບົດຮຽນຕໍ່ໄປ.

ການຕິດຕາມການປະເມີນແມ່ນໝາຍເຖິງ:

a. ການຖ່າຍທອດເນື້ອໃນບົດຮຽນທັງໝົດ ສໍາລັບທຸກລາຍວິຊາໃນສົກຮຽນ.
b. ການຖ່າຍທອດເນື້ອໃນບົດຮຽນ ແລະ ການຊ່ວຍເຫຼືອນັກຮຽນໃນວິທີທີ່ຊ່ວຍໃຫ້ນັກຮຽນແຕ່ລະຄົນໃຫ້ບັນລຸຈຸດປະສົງຂອງບົດຮຽນ.

## 2. ທັກສະຂອງການວັດ ແລະ ປະເມີນຜົນ

ນັກສຶກສາເບິ່ງວິດີໂອ 12 ກ ແລະ 12 ຂ ເຊິ່ງເປັນວິດີໂອທີ່ໄດ້ລົງເລິກກ່ຽວກັບ 2 ທັກສະທີ່ສາຄັນ ເພື່ອວັດ ແລະ ປະເມີນນັກຮຽນ; ການສັງເກດ ແລະ ການຕັ້ງຄໍາຖາມ. ໃນຂະນະທີ່ເບິ່ງວິດີໂອນັ້ນ ໃຫ້ຂຽນບັນທຶກແຕ່ລະຍຸດທະວິທີທີ່ໄດ້ອະທິບາຍໄວ້ ສໍາລັບແຕ່ລະທັກສະ ໃສ່ໃນຫ້ອງລຸ່ມນີ້.

| |
|---|
| ວິທີໃນການສັງເກດ : |
| 1. ນໍາໃຊ້ເກນການປະເມີນແບບຮູບຣິກໃນບົດຮຽນ ເພື່ອເປັນທິດທາງໃຫ້ແກ່ການສັງເກດ( ເຊັ່ນ: ເພື່ອທີ່ຈະຮູ້ວ່າ ຈະສຸມໃສ່ຫຍັງ ຕະຫຼອດການສອນ ).<br>2. ກວດກາເບິ່ງວ່ານັກຮຽນປະຕິບັດໄປຕາມຂັ້ນຕອນທີ່ບອກ ຫຼື ບໍ, ສະໜອງການສະໜັບສະໜູນເພີ່ມເຕີມໃຫ້<br>ແກ່ນັກຮຽນທີ່ກໍາລັງສັບສົນ ຫຼື ພົບຄວາມຫຍຸ້ງຍາກເພື່ອໃຫ້ພວກເຂົາສາມາດປະຕິບັດກິດຈະກໍາໄດ້ຢ່າງສໍາເລັດຜົນ.<br>3. ເມື່ອທໍາການສັງເກດ, ໃຫ້ຢືນຢູ່ໃກ້ກັບນັກຮຽນໃນຈຸດທີ່ສາມາດຮັບຟັງ ພວກເຂົາ ແລະ ( ຫຼື ) ເບິ່ງໜ້າວຽກທີ່ພວກເຂົາ ປະຕິບັດຢູ່ ແຕ່ໃຫ້ຢູ່ໄກພໍ ເພື່ອບໍ່ໃຫ້ເປັນການລົບກວນພວກເຂົາ.<br>4. ຢູ່ໃນຂັ້ນຝຶກປະຕິບັດ ແລະ ນໍາໃຊ້ ແມ່ນໃຫ້ນໍາໃຊ້ເກນຮູບຣິກ ເພື່ອສັງເກດ ແລະ ໃຫ້ຄະແນນແກ່ນັກຮຽນໃຫ້ໄດ້ຫຼາຍທີ່ສຸດເທົ່າທີ່ເຮັດໄດ້ໂດຍໃຊ້ເວລາໃຫ້ພຽງພໍໃນການສັງເກດນັກຮຽນແຕ່ລະຄົນເພື່ອໃຫ້ສາມາດໃຫ້ຄະແນນແກ່ພວກເຂົາໄດ້ຢ່າງຍຸດຕິທໍາ. |
| ວິທີໃນການຕັ້ງຄໍາຖາມ |
| 1. ຖາມຄໍາຖາມນັກຮຽນ ພາຍຫຼັງທີ່ໃຫ້ຄໍາແນະນໍາກ່ຽວກັບກິດຈະກໍາ ເພື່ອກວດຄືນວ່າ ນັກຮຽນໄດ້ເຂົ້າໃຈກ່ຽວກັບສິ່ງທີ່ພວກເຂົາຈະເຮັດບໍ.<br>2. ໃນບາດກ້າວການຈັດກິດຈະກໍາການສອນ, ໃຫ້ນັກຮຽນເປັນລາຍບຸກຄົນ ອະທິບາຍຄໍາຕອບໃຫ້ຂອງພວກເຂົາຟັງສິ່ງດັ່ງກ່າວນີ້ຈະຊ່ວຍໃຫ້ເຈົ້າເຂົ້າໃຈກ່ຽວກັບຂັ້ນຕອນການຄົ້ນຄິດຂອງເດັກນ້ອຍ.<br>3. ເມື່ອນໍາໃຊ້ເກນຮູບຣິກໃຫ້ຄະແນນນັກຮຽນຢູ່ໃນຂັ້ນການຝຶກແອບ ແລະ ນໍາໃຊ້; ຖ້າເຈົ້າຮູ້ສຶກວ່າມີນັກຮຽນຄົນໃດໜຶ່ງສາມາດເຮັດໄດ້ຫຼາຍກວ່ານັ້ນ, ໃຫ້ຖາມຄໍາຖາມທີ່ຍາກຂຶ້ນເພື່ອທ້າທາຍພວກເຂົາ.<br>4. ເມື່ອຖາມຄໍາຖາມໃດໜຶ່ງກັບນັກຮຽນຕ້ອງໃຫ້ພວກເຂົາໄດ້ມີເວລາຄິດ.<br>5. ໃຫ້ໂອກາດແກ່ນັກຮຽນໄດ້ຕອບຄໍາຖາມຢ່າງສະເໝີພາບກັນຕ້ອງປະກອບດ້ວຍເດັກຍິງ ແລະ ເດັກຊາຍສະຫຼັບກັນບໍ່ຈໍາເປັນຕ້ອງໃຫ້ໂອກາດແກ່ນັກຮຽນທີ່ຍົກມືຂໍຕອບພຽງຢ່າງດຽວ, ແຕ່ຕ້ອງໃຫ້ໂອກາດແກ່ນັກຮຽນທີ່ບໍ່ຍົກມືຂໍຕອບເຊັ່ນດຽວກັນ. |

## 3. ການນຳໃຊ້ເກນການປະເມີນແບບຣູບຣິກ

ກ່ອນຈະຂຶ້ນຫ້ອງສອນຄູສອນຕ້ອງອ່ານລາຍລະອຽດບົດສອນ ແລະ ເກນການປະເມີນແບບຣູບຣິກ ຢູ່ໃນປຶ້ມຄູ່ມືຄູກ່ອນລ່ວງໜ້າ, ກະກຽມອຸປະກອນຕ່າງໆທີ່ຈຳເປັນສຳລັບກິດຈະກຳ, ຕັດສິນໃຈວ່າຈະທຳການປະເມີນນັກຮຽນຄົນໃດ ແລະ ຂຽນວັນທີ, ຊື່ບົດຮຽນ ແລະ ຊື່ນັກຮຽນ ( ຜູ້ທີ່ຈະທຳການປະເມີນຜົນນັ້ນ) ໃສ່ໃນປຶ້ມບັນທຶກ.

ຄູສອນຈິ່ງຍ່າງເລາະໄປມາອ້ອມຫ້ອງຮຽນໃນຂະນະທີ່ກຳລັງປະເມີນນັກຮຽນ ຄູສອນຍ່າງເລາະໄປມາອ້ອມຫ້ອງຮຽນກໍເພື່ອໃຫ້ໄດ້ຍິນ ສິ່ງທີ່ນັກຮຽນກຳລັງເວົ້າ ແລະ ເຮັດຢູ່ ແລະ ສາມາດທຳການປະເມີນນັກຮຽນໄດ້ດີຂຶ້ນຕື່ມອີກ.

ຄູສອນຈະຂຽນຄະແນນການປະເມີນໃສ່ປຶ້ມບັນທຶກຂອງຄູສອນຂະນະທີ່ກຳລັງປະຕິບັດກິດຈະກຳ.

ຄູສອນຈິ່ງຕັ້ງຄຳຖາມນັກຮຽນໃນຂະນະທີ່ກຳລັງປະຕິບັດກິດຈະກຳນີ້ຢູ່ ການຕັ້ງຄຳຖາມແມ່ນເຕັກນິກທີ່ສຳຄັນສຳລັບການປະເມີນຜົນ, ບາງຄັ້ງນັກຮຽນຄົນໃດຄົນໜຶ່ງອາດຮູ້ຄຳຕອບແລ້ວແຕ່ອາດຕ້ອງການໃຫ້ມີການກະຕຸ້ນຈາກຄູຕື່ມ.

ຄູສອນຈະປະເມີນນັກຮຽນໝົດທຸກຄົນຢູ່ພາຍໃນກິດຈະກຳດຽວບໍ? ບໍ່ແມ່ນ ຄູສອນອາດທຳການປະເມີນນັກຮຽນປະມານ 10 ຄົນ ( ສ່ວນທີ່ຍັງເຫຼືອອາດຈະໄດ້ຮັບການປະເມີນໃນຂັ້ນຕອນສະຫຼຸບບົດຮຽນ ຫຼື ໃນບົດສອນບົດຕໍ່ໄປ ).

ຄູສອນຈະປັບປ່ຽນຄະແນນທີ່ໄດ້ຈາກເກນການປະເມີນແບບຣູບຣິກມາເປັນຄະແນນສ່ວນ 10ໄດ້ ຄະແນນຂອງນັກຮຽນ ຫານ ຄະແນນສູງສຸດໃນເກນການປະເມີນ ຄູນ ໃຫ້ ສິບ ( ປັດຕົວເລດຂຶ້ນລົງຕາມຄວາມເໝາະສົມ ) ຖ້າສຳມະນາກອນພົບຄວາມຫຍຸ້ງຍາກໃນການປ່ຽນຄະແນນໃຫ້ມາເປັນຄະແນນສ່ວນ 10 ພວກເຂົາສາມາດອີງໃສ່ຮ່າງຕາຕະລາງໃນພາກແນະນຳລວມຂອງຄູ່ມືຄູວິຊາພາສາລາວຊັ້ນປະຖົມສຶກສາປີທີ 2 ເຫຼັ້ມ 1 ໜ້າທີ 7

## 5.ການໃຫ້ການຊ່ວຍເຫຼືອນັກຮຽນ

1. ການວັດ ແລະ ປະເມີນຜົນມັນເປັນສິ່ງສຳຄັນທີ່ຄູສອນຕ້ອງຕິດຕາມປະເມີນ ເພື່ອຮັບປະກັນວ່ານັກຮຽນທັງໝົດນັ້ນໄດ້ຮັບການຊ່ວຍເຫຼືອໃນເວລາທີ່ພວກເຂົາຕ້ອງການ. ຄູສອນສາມາດໃຫ້ການຊ່ວຍເຫຼືອນັກຮຽນໃນຂະນະທີ່ສອນ

**ຕົວຢ່າງ**

ໃນຂະນະທີ່ຄູສອນຖາມນັກຮຽນ ແຕ່ສັງເກດໄດ້ວ່າ ນັກຮຽນຜູ້ໜຶ່ງບໍ່ເຂົ້າໃຈກິດຈະກຳ ຄູສອນແມ່ນໄດ້ໃຊ້ເວລາອະທິບາຍກ່ຽວກັບກິດຈະກຳນັ້ນຄືນ ແລະ ສາທິດກິດຈະກຳນັ້ນໃຫ້ນັກຮຽນເບິ່ງ ຫຼື ໃຫ້ການຊ່ວຍເຫຼືອພາຍຫຼັງການສອນ ຫຼື ໃຫ້ການຊ່ວຍເຫຼືອໃນບົດຮຽນຕໍ່ໄປ.

**ຕົວຢ່າງ**

ຄູສອນສັງເກດນັກຮຽນຜູ້ທີ່ມີບັນຫາເລື້ອຍໆ ເພື່ອວ່າໃນບົດຮຽນຕໍ່ໄປ ຄູສອນຈະໄດ້ຈັດນັກຮຽນໄປນັ່ງກັບນັກຮຽນຜູ້ທີ່ຮຽນໄວກວ່າ ເຊິ່ງເປັນຜູ້ທີ່ຈະສາມາດໃຫ້ການຊ່ວຍເຫຼືອພວກເຂົາໄດ້.

2. ຄູສອນສາມາດນຳໃຊ້ ວິທີທີ່ຄູຄິດວ່າຊ່ວຍເຫຼືອນັກຮຽນແລ້ວ ນັກຮຽນເຮົາຮຽນດີຂຶ້ນເພື່ອໃຫ້ການຊ່ວຍເຫຼືອນັກຮຽນຢ່າງທັນທີ ຫຼື ໃຫ້ການຊ່ວຍເຫຼືອພາຍຫຼັງການສອນ

| ການຊ່ວຍເຫຼືອໃນຂະນະທີ່ສອນ ( ການຊ່ວຍເຫຼືອທັນທີ ) | ການຊ່ວຍເຫຼືອພາຍຫຼັງການສອນ |
|---|---|
| -ຖ້າມີນັກຮຽນບໍ່ເຂົ້າໃຈ, ໃຫ້ຊຸກຍູ້ ແລະ ກະຕຸ້ນພວກເຂົາດ້ວຍການອະທິບາຍໃຫ້ແກ່ພວກເຂົາ ແລະ ຖາມຄໍາຖາມທີ່ເປັນການຊີ້ນໍາທີ່ຈະຊ່ວຍໃຫ້ພວກເຂົາຊອກຫາຄໍາຕອບໄດ້ຢ່າງຖືກຕ້ອງໂດຍທີ່ບໍ່ຕ້ອງບອກຄໍາຕອບແກ່ພວກເຂົາ.<br>-ຖ້າມີນັກຮຽນຄົນໃດໜຶ່ງຕອບບໍ່ຖືກຕາມຄາຖາມ, ໃຫ້ສາທິດເປັນແບບຢ່າງກ່ຽວກັບຄໍາຕອບຂອງຄໍາຖາມອື່ນທີ່ຄ້າຍຄືກັນ; ຊ່ວຍໃຫ້ເຂົາເຂົ້າໃຈວ່າຍ້ອນຫຍັງສິ່ງດັ່ງກ່າວນີ້ ຈຶ່ງເປັນຄໍາຕອບທີ່ຖືກຕ້ອງ ຫຼັງຈາກນັ້ນ, ກະຕຸກຊຸກຍູ້ໃຫ້ນັກຮຽນຄົນດັ່ງກ່າວລອງຕອບຄໍາຖາມທີ່ພວກເຂົາຕອບຜິດອີກເທື່ອໜຶ່ງ.<br>-ຖ້າເຈົ້າພົບເຫັນວ່ານັກຮຽນບາງຄົນພົບຄວາມຫຍຸ້ງຍາກຢູ່ເລື້ອຍໆຢູ່ໃນບົດຮຽນໃດໜຶ່ງ, ມັນຈະເປັນປະໂຫຍດຫຼາຍຖ້າຈະຄິດກ່ຽວກັບວິທີການສະໜັບສະໜູນນັກຮຽນພວກນັ້ນຫຼັງຈາກບົດສອນດັ່ງກ່າວ ຫຼື ດັດປັບໃຫ້ເຂົ້າກັບການຈັດກຸ່ມນັກຮຽນຢູ່ໃນບົດສອນຕໍ່ໄປມາສຶກສາກ່ຽວກັບວິທີເຫຼົ່ານີ້ແບບລະອຽດກັນ.<br>-ຢູ່ໃນຫ້ອງຄວບ, ຖ້າເຈົ້າ ສັງເກດເຫັນພວກນັກຮຽນພົບຄວາມຫຍຸ້ງຍາກຕະຫຼອດບົດສອນດັ່ງກ່າວ, ໃຫ້ຈັດເອົານັກຮຽນເຫຼົ່ານັ້ນໄປນັ່ງກັບນັກຮຽນທີ່ຮຽນໄດ້ດີກວ່າເຊິ່ງຈະສາມາດໃຫ້ການຊ່ວຍເຫຼືອ ແລະ ໃຫ້ການສະໜັບສະໜູນແກ່ພວກເຂົາໄດ້ໃນບົດຮຽນຕໍ່ໆໄປ.<br>- ຖ້າມີນັກຮຽນໃນຫ້ອງເຈົ້າທີ່ເວົ້າພາສາລາວບໍ່ແມ່ນພາສາແມ່ຂອງພວກເຂົາ ແລະ ສັງເກດເຫັນວ່ານັກຮຽນເຫຼົ່ານີ້ພົບກັບຄວາມຫຍຸ້ງຍາກ; ຢູ່ໃນບົດສອນຕໍ່ໄປ, ໃຫ້ຈັບຄູ່ນັກຮຽນເຫຼົ່ານັ້ນ ກັບຜູ້ທີ່ສາມາດເວົ້າພາສາລາວໄດ້ດີກວ່າເຊິ່ງຈະສາມາດໃຫ້ການສະໜັບສະໜູນເພີ່ມເຕີມແກ້ພວກເຂົາໄດ້. | ຖ້າໃນຕອນທ້າຍຂອງການສອນ, ມີນັກຮຽນບາງຄົນບໍ່ສາມາດບັນລຸໄດ້ຕາມຈຸດປະສົງດ້ານການຮຽນຮູ້ຂອງບົດສອນດັ່ງກ່າວ; ໃຫ້ໃຊ້ເວລາຊ່ວງພັກຜ່ອນ, ເວລາອາຫານທ່ຽງ ຫຼື ໃນຊ່ວງຊົ່ວໂມງເສີມເພື່ອໃຫ້ພວກເຂົາໄດ້ທໍາການເຝິກແອບຫຼາຍຂຶ້ນກ່ອນຈະເຂົ້າສູ່ບົດໃໝ່ສາມາດລິ້ມຄືນກິດຈະກໍາການຝຶກແອບນີ້ກັບນັກຮຽນເຫຼົ່ານີ້ ຫຼື ສໍາລັບພາສາລາວແມ່ນໃຫ້ໃຊ້ເກມການຫຼິ້ນ ຫຼື ກິດຈະກໍາທີ່ພັນລະນາໄວ້ຢູ່ດ້ານຫຼັງຂອງປຶ້ມຄູ່ມືຄູສໍາລັບວິຊາພາສາລາວ. |

ເບິ່ງວີດີໂອ 12 ຄ ເຊິ່ງເປັນວີດີໂອທີ່ອະທິບາຍເຖິງວິທີການຊ່ວຍເຫຼືອຕ່າງໆ ທີ່ຄູສອນສາມາດນຳໃຊ້ໃນຫ້ອງຮຽນ. ພ້ອມນັ້ນໃຫ້ຂີດອ້ອມເອົາແນວຄວາມຄິດຂອງນັກສຶກສາຂ້າງເທິງນັ້ນ ຖ້າແນວຄວາມຄິດຂອງນັກສຶກສານັ້ນຫາກໄດ້ເວົ້າເຖິງ / ພັນລະນາໃນວີດີໂອ .

## 6. ການນຳໃຊ້ຝຶກປະຕິບັດ

### 6.1 ວິຊາພາສາລາວ

ຄູກຳລັງສອນກິດຈະກາ 10 ( ການຂຽນທວາຍ) ຈາກບົດທີ 20, ຊົ່ວໂມງ 7-8, ປື້ມຄູ່ມືຄູ ວິຊາ ພາສາລາວ ໜ້າທີ 201 ຢູ່ໃນບົດຮຽນນີ້, ນັກຮຽນແມ່ນໄດ້ເສີມສ້າງ ແລະ ພັດທະນາທັກສະການອ່ານຂອງຕົນ ແລະ ໄດ້ສຶກສາລີງເລີກກ່ຽວກັບວັກຕອນຕ່າງໆຂອງບົດອ່ານກ່ຽວກັບການໜຶ້ງເຂົ້າ. ໃນຕອນທ້າຍຂອງການຂຽນທວາຍໃຫ້ນັກຮຽນເອົາປຶ້ມຂອງພວກເຂົາມາວາງໄວ້ເທິງໂຕະຄູ ເພື່ອໃຫ້ຄະແນນການຂຽນທວາຍຂອງນັກຮຽນ, ນຳໃຊ້ເກນການໃຫ້ຄະແນນທີ 14 ເພື່ອໃຫ້ຄະແນນສອງຕົວຢ່າງຂອງບົດຂຽນທວາຍລຸ່ມນີ້ ແລະ ຄິດໄລ່ຄະແນນປະຈຳເດືອນຂອງນັກຮຽນ.

| | |
|---|---|
| ນາງ ນ້ອຍ: |  |
| ທ້າວ ເກດ: |  |

| ຄຳເຫັນ ແລະ ຄຳຕອບ ລາຍວິຊາ : ພາສາລາວ ( ຫັດຂຽນ ) | |
| --- | --- |
| ນາງນ້ອຍ: | ທ້າວ ເກດ : |
| ນາງນ້ອຍ: ......................................................................................................................<br>ທ້າວ ເກດ : ...................................................................................................................... | |

| | | ບັນທຶກການປະເມີນຜົນສຳລັບພາສາລາວ | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | | ບົດທີ 17 | | | | | | ບົດທີ 18 | | | | | |
| | | ນ່ຳເບີຣູບຣິກ | | | | | | ນ່ຳເບີຣູບຣິກ | | | | | |
| | | 8 | 16 | 2 | 5 | | | 9 | 6 | 17 | 2 | | |
| | | ຄະແນນຣູບຣິກສູງສຸດ | | | | ຄະແນນສູງສຸດທີ່ເປັນໄປໄດ້ | | ຄະແນນຣູບຣິກສູງສຸດ | | | | ຄະແນນສູງສຸດທີ່ເປັນໄປໄດ້ | |
| | | 3 | 3 | 2 | 2 | 10 | | 3 | 2 | 3 | 2 | 10 | |
| ລ/ດ | ຊື່ນັກຮຽນ | ຄະແນນນັກຮຽນ | | | | ຄະແນນລວມ | ຄະແນນສ່ວນສິບ | ຄະແນນນັກຮຽນ | | | | ຄະແນນລວມ | ຄະແນນສ່ວນສິບ |
| 1 | ນາງ ນ້ອຍ | | | | | | | 2 | 2 | 2 | 1 | 7 | |
| 2 | ທ້າວ ເກດ | | | | | | | 2 | 2 | 3 | 1 | 8 | |
| 3 | ນາງ ດາ | 2 | 2 | 1 | 1 | 6 | | | | | | | |
| 4 | ທ້າວ ຫຼ້າ | 3 | 1 | 1 | 2 | 7 | | | | | | | |

| | | ບັນທຶກການປະເມີນຜົນສຳລັບພາສາລາວ | | | | | | | | | | | |
|---|---|---|---|---|---|---|---|---|---|---|---|---|---|
| | | ບົດທີ 19 | | | | | | ບົດທີ 20 | | | | | |
| | | ນ່ຳເບີຣູບຣິກ | | | | | | ນ່ຳເບີຣູບຣິກ | | | | | |
| | | 9 | 2 | 6 | 17 | | | 8 | 6 | 2 | 14 | | |
| | | ຄະແນນຣູບຣິກສູງສຸດ | | | | ຄະແນນສູງສຸດທີ່ເປັນໄປໄດ້ | | ຄະແນນຣູບຣິກສູງສຸດ | | | | ຄະແນນສູງສຸດທີ່ເປັນໄປໄດ້ | |
| | | 3 | 2 | 2 | 3 | 10 | | 3 | 2 | 2 | 3 | 10 | |
| ລ/ດ | ຊື່ນັກຮຽນ | ຄະແນນນັກຮຽນ | | | | ຄະແນນລວມ | ຄະແນນສ່ວນສິບ | ຄະແນນນັກຮຽນ | | | | ຄະແນນລວມ | ຄະແນນສ່ວນສິບ |
| 1 | ນາງ ນ້ອຍ | | | | | | | 2 | 1 | 2 | | | |
| 2 | ທ້າວ ເກດ | | | | | | | 3 | 2 | 2 | | | |
| 3 | ນາງ ດາ | 2 | 2 | 2 | 0 | 6 | | | | | | | |
| 4 | ທ້າວ ຫຼ້າ | 2 | 1 | 2 | 0 | 5 | | | | | | | |

**ວິທີໄລ່ຄະແນນປະຈຳເດືອນ:**

ຈຸດນີ້ແມ່ນຂຶ້ນກັບຂະໜາດຂອງຫ້ອງຮຽນ ( ຈຳນວນຂອງນັກຮຽນໃນຫ້ອງ ) ແລະ ຈຳນວນກຸ່ມຂອງນັກຮຽນທີ່ຈະປະເມີນທີ່ຄູໄດ້ຈັດ, ຄູຈະໄດ້ປະເມີນນັກຮຽນໃນ 1-4 ບົດຮຽນ ສະນັ້ນ, ຄະແນນລວມແມ່ນຈະໄດ້ຈາກຄະແນນທີ່ປະເມີນໃນ 1-4 ບົດຮຽນ. ຖ້າຄູໄດ້ປະເມີນນັກຮຽນຫຼາຍກວ່າໜຶ່ງບົດ ເພື່ອທີ່ຈະຄິດໄລ່ມາເປັນຄະແນນປະຈຳເດືອນ ເຊິ່ງເປັນຄະແນນສະເລ່ຍຈາກຄະແນນລວມຂອງນັກຮຽນ. ຄະແນນສະເລ່ຍສາມາດຄິດໄລ່ໂດຍເອົາຄະແນນລວມບວກເຂົ້າກັນ ແລະ ຈາກນັ້ນ, ຫານໃຫ້ຜົນບວກຄະແນນລວມທີ່ໄດ້ຮັບນັ້ນ. ຕົວຢ່າງ, ຫ້ອງຕາຕະລາງຂ້າງເທິງນັ້ນ ຄະແນນສະເລ່ຍປະຈຳເດືອນຂອງທ້າວ ຫຼ້າ ແມ່ນ 6 . ຈຸດນີ້ແມ່ນໄດ້ຄິດໄລ່ໂດຍປະຕິບັດຕາມນີ້ຄື 7 ( ຄະແນນລວມຈາກບົດທີ 17 ) + 5 ( ຄະແນນລວມຈາກບົດທີ 19) ÷ 2 ( ຈຳນວນຄັ້ງຂອງຄະແນນລວມ ). ຖ້າຄູມີຫ້ອງຮຽນໃຫຍ່ ( ຈຳນວນນັກຮຽນໃນຫ້ອງຫຼາຍ ) ແລະ ຄູໄດ້ແບ່ງນັກຮຽນອອກເປັນ 4 ກຸ່ມ ເພື່ອປະເມີນ ໝາຍວ່ານັກຮຽນແຕ່ລະຄົນຈະຖືກປະເມີນໃນໜຶ່ງບົດຕໍ່ເດືອນ, ຄະແນນປະຈຳເດືອນແມ່ນເປັນຄະແນນລວມຂອງບົດຮຽນທີ່ຄູປະເມີນເຂົາເຈົ້າ.

ຕົວຢ່າງ: ຄະແນນປະຈຳເດືອນ : ນາງ ນ້ອຍ:..........., ທ້າວ ເກດ:..............,

ພາຍຫຼັງທີ່ສອນສຳເລັດບົດທີ 20, ຄູສັງເກດໄດ້ວ່າ ນັກຮຽນບາງຈຳນວນມີບັນຫາກ່ຽວກັບທັກສະການຂຽນ. ຄູໄດ້ເບິ່ງຜົນງານການຂຽນຂອງນັກຮຽນ ນາງ ດາ ແລະ ທ້າວ ຫຼ້າ ແລະ ສັງເກດເຫັນວ່າພວກເຂົາທັງສອງນັ້ນແມ່ນຍັງມີບັນຫາກ່ຽວກັບການສະກົດຄຳ ແລະ ບໍ່ສາມາດນຳໃຊ້ເຄື່ອງໝາຍວັກຕອນໄດ້ຢ່າງຖືກຕ້ອງ. ຄູສາມາດໃຫ້ການຊ່ວຍເຫຼືອນັກຮຽນເຫຼົ່ານີ້ ໃນການພັດທະນາທັກສະການຂຽນຂອງພວກເຂົາຄືແນວໃດ ?

| ຫ້ອງຈົດບັນທຶກ: |
| --- |
| |

**6.2 ວິຊາ ວິທະຍາສາດ ແລະ ສິ່ງແວດລ້ອມ.**

**1.** ໃນຂະນະທີ່ຄູຈະໄດ້ສຶກສາເບິ່ງບົດທີ 21, ຊົ່ວໂມງທີ 1 ກ່ຽວກັບເຄື່ອງວັດແທກອຸນຫະພູມ. ຄູໄດ້ໃຫ້ຄໍາແນະນໍາໃນການເຮັດກິດຈະກໍາ 1 ຕໍ່ນັກຮຽນແນວໃດ. ໃນກິດຈະກໍານີ້ ນັກຮຽນຕ້ອງໄດ້ເຮັດວຽກເປັນກຸ່ມ. ແຕ່ລະກຸ່ມແມ່ນຈະໄດ້ຮັບກະຕຸກນໍ້າ 3 ກະຕຸກ; ກະຕຸກທີໜຶ່ງແມ່ນກະຕຸກນໍ້າເຢັນ, ກະຕຸກທີສອງແມ່ນກະຕຸກນໍ້າອຸ່ນ ແລະ ກະຕຸກທີສາມແມ່ນກະຕຸກນໍ້າຮ້ອນ. ຄູຈະໄດ້ຂຽນສິ່ງເຫຼົ່ານີ້ໃສ່ເທິງກະດານຄື: 1 =ເຢັນ , 2 = ອຸ່ນ , 3 = ຮ້ອນ, ແລະ ອະທິບາຍຕໍ່ກັບນັກຮຽນວ່າ ພວກເຂົາຄວນສໍາພັດກະຕຸກນໍ້າດັ່ງກ່າວ ແລ້ວໃຫ້ຂຽນໝາຍເລກທີ່ຖືກຕ້ອງຂອງກະຕຸກນັ້ນໃສ່ຕາມນໍ້າທີ່ຢູ່ໃນກະຕຸກວ່າ ເປັນນໍ້າເຢັນ, ນໍ້າອຸ່ນ ຫຼື ນໍ້າຮ້ອນ, ຄູກວດຄືນຄວາມເຂົ້າໃຈຂອງນັກຮຽນວ່າພວກເຂົາຕ້ອງໄດ້ເຮັດຫຍັງ ແຕ່ຖ້ານັກຮຽນນັ້ນຫາກຍັງສັບສົນກ່ຽວກັບສິ່ງທີ່ພວກເຂົາຈະຂຽນໃສ່ກະຕຸກ ຄູຈະຊ່ວຍໃຫ້ນັກຮຽນເຂົ້າໃຈກ່ອນທີ່ຈະໃຫ້ນັກຮຽນໄດ້ເລີ່ມເຮັດກິດຈະກໍາແນວໃດ?

| ຫ້ອງຈົດບັນທຶກ |
|---|
| |

2. ໃນຊົ່ວໂມງທີ 2, ກິດຈະກຳ 3 ( ຂັ້ນຝຶກປະຕິບັດ ແລະ ນຳໃຊ້ ). ໃນກິດຈະກຳນີ້, ນັກຮຽນຈະຕ້ອງໄດ້ແຕ້ມຮູບເຄື່ອງວັດແທກອຸນຫະພູມ ແລະ ໝາຍພາກຕ່າງໆຂອງເຄື່ອງວັດແທກອຸນຫະພູມ ແລະ ອະທິບາຍຕໍ່ກັບຄູສອນວ່າ ເຄື່ອງວັດແທກອຸນຫະພູມນຳໃຊ້ເພື່ອຫຍັງ. ອ່ານເກນປະເມີນແບບຮູບຣິກສຳລັບບົດຮຽນນີ້ ແລະ ນຳໃຊ້ເກນນັ້ນເພື່ອໃຫ້ຄະແນນນັກຮຽນທັງສອງຄົນລຸ່ມນີ້ ແລະ ປ່ຽນຄະແນນມາເປັນຄະແນນສ່ວນ 10.

ນາງນ້ອຍ:






ຄູ: "ຫຼານ ສາມາດບອກສາວຄູໄດ້ບໍ່ວ່າ ເຄື່ອງວັດແທກອຸນຫະພູມແມ່ນຫຍັງ?"

ນ້ອຍ: "ພວກເຮົາໃຊ້ເຄື່ອງວັດແທກອຸນຫະພູມ ເພື່ອຮູ້ໄດ້ອຸນຫະພູມຂອງສິ່ງຕ່າງໆ."

ທ້າວເກດ:






ຄູ: "ຫຼານສາມາດບອກສາວຄູໄດ້ບໍ່ວ່າພວກເຮົາໃຊ້ເຄື່ອງວັດແທກອຸນຫະພູມເພື່ອຫຍັງ?"

ເກດ: "ແມ່ຂອງຫຼານເອົາມາແທກໄດຂອງຫຼານ ເວລາທີ່ຫຼານໄຂ້."

ຄູ: "ຫຼານສາມາດບອກໄດ້ບໍ່ວ່າ ເປັນຫຍັງ?"

ເກດ: "ຫຼານບໍ່ຮູ້."

| ຄຳເຫັນ ແລະ ຄຳຕອບ ລາຍວິຊາ : ວິທະຍາສາດ ແລະ ສິ່ງແວດລ້ອມ | |
|---|---|
| ນາງນ້ອຍ: | ທ້າວເກດ: |
| ນາງນ້ອຍ: ............................................................................................................. | |
| ທ້າວເກດ:............................................................................................................... | |

| ບັນທຶກການປະເມີນຜົນສຳລັບວິທະຍາສາດ ແລະ ສິ່ງແວດລ້ອມ | | | | | | | | | |
|---|---|---|---|---|---|---|---|---|---|
| | | ບົດທີ 21 | | ບົດທີ 22 | | ບົດທີ 23 | | ບົດທີ 24 | |
| | | ຄະແນນຮຸບຣິກສູງສຸດ | | ຄະແນນຮຸບຣິກສູງສຸດ | | ຄະແນນຮຸບຣິກສູງສຸດ | | ຄະແນນຮຸບຣິກສູງສຸດ | |
| | | | | | | | | | |
| ລ/ດ | ຊື່ນັກຮຽນ | ຄະແນນ ນັກຮຽນ | ຄະແນນ ປ່ຽນແປງ | ຄະແນນ ນັກຮຽນ | ຄະແນນ ປ່ຽນແປງ | ຄະແນນ ນັກຮຽນ | ຄະແນນ ປ່ຽນແປງ | ຄະແນນ ນັກຮຽນ | ຄະແນນ ປ່ຽນແປງ |
| 1 | ນາງ ນ້ອຍ | | | | | | | | |
| 2 | ທ້າວ ເກດ | | | | | | | | |
| 3 | ນາງ ດາ | | | | | | | | |
| 4 | ທ້າວ ຫຼ້າ | | | | | | | | |

6.3 ວິຊາ ພາສາອັງກິດ

ຄູກຳລັງສອນບົດທີ 5, ພາກທີ 2 ເຊິ່ງຈະນາສະເໜີນັກຮຽນກ່ຽວກັບສຽງ I ຄູໄດ້ໃຫ້ການຊ່ວຍເຫຼືອນັກຮຽນ ເພື່ອຝຶກຂຽນ ຂີດຕົວອັກສອນກາງຫາວ ແລະ ຂຽນໃສ່ປຶ້ມຂອງຕົນເອງ, ອະທິບາຍໃຫ້ນັກຮຽນວ່າຈະເລີ່ມຈາກຈຸດໃດ ແລະ ຢຸດຢູ່ຈຸດໃດ. ນັກຮຽນໝົດທຸກຄົນແມ່ນເຮັດໄດ້ດີ. ທ່ານກໍກ້າວໄປສູ່ກິດຈະກຳ 5 ເຊິ່ງເປັນກິດຈະກຳທີ່ນັກຮຽນນັ້ນຕ້ອງໄດ້ກ່າຍເອົາຕົວອັກສອນ T ໃສ່ປຶ້ມຂອງໃຜລາວ. ຄູຕິດຕາມນັກຮຽນ ແລະ ສັງເກດໄດ້ວ່າ ມີນັກຮຽນຫຼາຍໆຄົນຂຽນໂຕນ້ອຍເກີນໄປ ແລະ ໝາຍຈ້ຳ. ຄູຈະໃຫ້ການຊ່ວຍເຫຼືອນັກຮຽນເຫຼົ່ານີ້ແນວໃດ ?

| ຫ້ອງຈົດບັນທຶກ |
|---|
| |

1. ຕໍ່ມາໃນອາທິດນັ້ນ, ຄູເຮັດກິດຈະກຳໃນຂັ້ນຝຶກປະຕິບັດ ແລະ ນຳໃຊ້ ຊີ້ ແລະ ເວົ້າ ຊົ່ວໂມງທີ 1 ບົດທີ 5. ໃນກິດຈະກຳນີ້ ນັກຮຽນຕ້ອງໄດ້ເຮັດວຽກເປັນຄູ່. ນັກຮຽນຜູ້ໜຶ່ງຊີ້ໃສ່ວັດຖຸ ຮູບທີ່ຢູ່ໃນຮູບພາບໃນປຶ້ມແບບຮຽນ ( ໜ້າ 22-23) ແລະ ນັກຮຽນອີກຜູ້ໜຶ່ງເວົ້າຊື່ຂອງວັດຖຸນັ້ນ. ອ່ານການປະເມີນແບບຮູກຣິກສຳລັບບົດຮຽນນີ້ ແລະ ນຳໃຊ້ເກນຮູບຣິກເພື່ອໃຫ້ຄະແນນນັກຮຽນທັງສອງຄົນລຸ່ມນີ້ ແລະ ປ່ຽນຄະແນນມາເປັນຄະແນນສ່ວນ 10

| | |
|---|---|
| ນາງ ນ້ອຍ:<br>ນັກຮຽນ B ຊີ້ໃສ່ວັດຖຸ/ຮູບ 1. ນັກຮຽນ A: 'chair'. ນັກຮຽນ B ຊີ້ໃສ່ວັດຖຸ/ຮູບ 2. ນັກຮຽນ A: 'ສໍດຳ'. ນັກຮຽນ B ຊີ້ໃສ່ວັດຖຸ/ຮູບ 3. ນັກຮຽນ A: 'bag'. ນັກຮຽນ B ຊີ້ໃສ່ວັດຖຸ/ຮູບ 4. ນັກຮຽນ A: 'desk'. ນັກຮຽນ B ຊີ້ໃສ່ວັດຖຸ/ຮູບ 5. ນັກຮຽນ A: 'book'. ນັກຮຽນ B ຊີ້ໃສ່ວັດຖຸ/ຮູບ 6. ນັກຮຽນ A: 'pencil'. |  |
| ທ້າວ ເກດ:<br>ນັກຮຽນ A ຊີ້ໃສ່ ວັດຖຸ/ຮູບ 1. ນັກຮຽນ B: 'ຂ້ອຍຈື່ບໍ່ໄດ້'. ນັກຮຽນ A ຊີ້ໃສ່ວັດຖຸ/ຮູບ 2. ນັກຮຽນ B: 'pencil'. ນັກຮຽນ A ຊີ້ໃສ່ວັດຖຸ/ຮູບ 3. ນັກຮຽນ B: 'bag'. ນັກຮຽນ A ຊີ້ໃສ່ວັດຖຸ/ຮູບ 4. ນັກຮຽນ B: 'desk'. ນັກຮຽນ A ຊີ້ໃສ່ວັດຖຸ/ຮູບທີ 5. ນັກຮຽນ B: 'book'. ນັກຮຽນ A ຊີ້ໃສ່ວັດຖຸ/ຮູບທີ 6. ນັກຮຽນ B: 'pen'. | |

| ຄຳເຫັນ ແລະ ຄຳຕອບ ລາຍວິຊາ : ພາສາອັງກິດ | |
|---|---|
| ນາງນ້ອຍ: | ທ້າວເກດ : |
| ນາງນ້ອຍ:........................................................................................................<br>ທ້າວເກດ : ...................................................................................................... | |

| ບັນທຶກການປະເມີນຜົນ ສຳລັບພາສາອັງກິດ | | | | | | | | | |
|---|---|---|---|---|---|---|---|---|---|
| | | ບົດທີ 5 | | ບົດທີ 6 | | ບົດທີ 7 | | ບົດທີ 8 | |
| | | ຄະແນນຮູບຮີກສູງສຸດ | | ຄະແນນຮູບຮີກສູງສຸດ | | ຄະແນນຮູບຮີກສູງສຸດ | | ຄະແນນຮູບຮີກສູງສຸດ | |
| | | | | | | | | | |
| ລ/ດ | ຊື່ນັກຮຽນ | ຄະແນນ ນັກຮຽນ | ຄະແນນ ປ່ຽນແປງ | ຄະແນນ ນັກຮຽນ | ຄະແນນ ປ່ຽນແປງ | ຄະແນນ ນັກຮຽນ | ຄະແນນ ປ່ຽນແປງ | ຄະແນນ ນັກຮຽນ | ຄະແນນ ປ່ຽນແປງ |
| 1 | ນາງ ນ້ອຍ | | | | | | | | |
| 2 | ທ້າວ ເກດ | | | | | | | | |
| 3 | ນາງ ດາ | | | | | | | | |
| 4 | ທ້າວ ຫຼ້າ | | | | | | | | |